ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນາຍົກລັດຖະມົນຕີ

ເລກທີ 03 /ນຍ
ນະຄອນຫຼວງວຽງຈັນ, ວັນທີ 09 . 02 . 2018

# ຄຳສັ່ງ
## ວ່າດ້ວຍການປັບປຸງຄຸນນະພາບການເຄື່ອນໄຫວ ຂອງກົງຈັກການຈັດຕັ້ງ ແລະ ການບັນຈຸລັດຖະກອນໃໝ່

ເຖິງ: - ບັນດາທ່ານລັດຖະມົນຕີ, ຫົວໜ້າອົງການລັດທຽບເທົ່າກະຊວງ.
- ບັນດາຫົວໜ້າຄະນະອົງການຈັດຕັ້ງພັກ ຂອງສູນກາງພັກ.
- ຫົວໜ້າຄະນະເລຂາທິການສະພາແຫ່ງຊາດ.
- ຫົວໜ້າຫ້ອງວ່າການປະທານປະເທດ.
- ປະທານສານປະຊາຊົນສູງສຸດ ແລະ ຫົວໜ້າອົງການໄອຍະການປະຊາຊົນສູງສຸດ.
- ປະທານອົງການກວດສອບແຫ່ງລັດ.
- ປະທານສູນກາງແນວລາວສ້າງຊາດ ແລະ ປະທານສະຫະພັນນັກຮົບເກົ່າແຫ່ງຊາດ.
- ປະທານ/ເລຂາບັນດາອົງການຈັດຕັ້ງມະຫາຊົນຂັ້ນສູນກາງ.
- ທ່ານເຈົ້າຄອງນະຄອນຫຼວງວຽງຈັນ ແລະ ບັນດາທ່ານເຈົ້າແຂວງ.

- ອີງຕາມກົດໝາຍວ່າດ້ວຍລັດຖະບານ ສະບັບເລກທີ 04/ສພຊ, ລົງວັນທີ 08 ພະຈິກ 2016;
- ອີງຕາມກົດໝາຍວ່າດ້ວຍພະນັກງານ-ລັດຖະກອນ ສະບັບເລກທີ 74/ສພຊ, ລົງວັນທີ 18 ທັນວາ 2015;
- ອີງຕາມດຳລັດວ່າດ້ວຍການປະຢັດ ແລະ ຕ້ານການຟູມເຟືອຍ ສະບັບເລກທີ 78/ລບ, ລົງວັນທີ 10 ມີນາ 2015;
- ອີງຕາມມະຕິກອງປະຊຸມລັດຖະບານສະໄໝສາມັນ ປະຈຳເດືອນສິງຫາ 2017 ສະບັບເລກທີ 10/ລບ, ລົງວັນທີ 06 ກັນຍາ 2017;
- ອີງຕາມໜັງສືສະເໜີຂອງກະຊວງພາຍໃນ ສະບັບເລກທີ 32/ພນ, ລົງວັນທີ 29 ມັງກອນ 2018.

ໃນໄລຍະຜ່ານມາ ລັດຖະບານ ໄດ້ຖືສຳຄັນວຽກງານການປັບປຸງກົງຈັກການຈັດຕັ້ງຊຶ່ງມີການປັບປຸງພາລະບົດບາດ, ໜ້າທີ່ຂອງບັນດາກະຊວງ, ອົງການຈັດຕັ້ງລັດຕ່າງໆ ແລະ ໄດ້ອອກນິຕິກຳຈຳນວນໜຶ່ງ ເປັນພື້ນຖານໃຫ້ແກ່ການຈັດຕັ້ງປະຕິບັດ ເພື່ອແນໃສ່ເຮັດໃຫ້ຄຸນນະພາບການເຄື່ອນໄຫວວຽກງານດີຂຶ້ນ ແລະ ປັບປຸງ

ຍົກສູງຄຸນນະພາບຂອງພະນັກງານ-ລັດຖະກອນ ດ້ວຍການສອບເສັງຄັດເລືອກລັດຖະກອນໃໝ່ມາໂດຍຕະຫຼອດ. ຜ່ານການຈັດຕັ້ງປະຕິບັດເຫັນວ່າຫຼາຍກະຊວງ, ຫຼາຍອົງການ ທັງສູນກາງ ແລະ ທ້ອງຖິ່ນ ໄດ້ມີຄວາມເອົາໃຈໃສ່ປັບປຸງກົງຈັກການຈັດຕັ້ງຂອງຕົນ ຕິດພັນກັບການກຳນົດຕຳແໜ່ງງານ ແລະ ຄັດເລືອກເອົາລັດຖະກອນໃໝ່ ເຮັດໃຫ້ມີຜົນສຳເລັດໂດຍພື້ນຖານ. ເຖິງຢ່າງໃດກໍ່ຕາມ, ຄຽງຄູ່ກັບຜົນສຳເລັດດັ່ງກ່າວນັ້ນການປັບປຸງກົງຈັກການຈັດຕັ້ງ ໃນລະບົບການເມືອງຂັ້ນຕ່າງໆ, ການກຳນົດຕຳແໜ່ງງານ ແລະ ການບັນຈຸລັດຖະກອນໃໝ່ຜ່ານມາກໍ່ຍັງມີດ້ານຈຳກັດ; ການປັບປຸງກົງຈັກ ແລະ ການກຳນົດຕຳແໜ່ງງານ ຍັງມີລັກສະນະເພີ່ມຂຶ້ນເລື້ອຍ ຊຶ່ງບໍ່ສອດຄ່ອງກັບທິດຊີ້ນຳຂອງພັກທີ່ວ່າ: ການປັບປຸງກົງຈັກການຈັດຕັ້ງໃນລະບົບການເມືອງຕ້ອງກະທັດຮັດ, ໂປ່ງໃສ, ໜັກແໜ້ນ ແລະ ສອດຄ່ອງກັບສະພາບຕົວຈິງ; ການສອບເສັງຄັດເລືອກລັດຖະກອນໃໝ່ຢູ່ບາງກະຊວງ, ອົງການ ແລະ ທ້ອງຖິ່ນ ມີລັກສະນະເຮັດເປັນພຽງແຕ່ຮູບການ, ຍັງບໍ່ທັນເນັ້ນໜັກດ້ານຄຸນນະພາບເທົ່າທີ່ຄວນ ເຮັດໃຫ້ມີການສິ້ນເປືອງງົບປະມານ, ສັງຄົມຈົ່ມວ່າ ແລະ ອື່ນໆ. ສາເຫດທີ່ພາໃຫ້ມີຂໍ້ຈຳກັດນັ້ນ ແມ່ນຍ້ອນຂາດການຄົ້ນຄວ້າ, ເຊື່ອມຊຶມຢ່າງລະອຽດ, ເລິກເຊິ່ງຕາມທິດຊີ້ນຳຂອງພັກ; ການສ້າງຕັ້ງກົງຈັກການຈັດຕັ້ງໃໝ່ ຍັງບໍ່ທັນໄດ້ຄົ້ນຄວ້າ-ວິເຄາະຢ່າງລະອຽດເລິກເຊິ່ງ; ການກຳນົດຕຳແໜ່ງງານຍັງມີລັກສະນະລວມໆ ບໍ່ແທດເໝາະກັບຕົວຈິງ; ລະດັບຄວາມຮູ້, ບົດຮຽນປະສົບການ ແລະ ຄວາມຮັບຜິດຊອບຂອງພະນັກງານ-ລັດຖະກອນ ທີ່ເຮັດວຽກດັ່ງກ່າວ ຍັງບໍ່ສູງເທົ່າທີ່ຄວນ, ບໍ່ເລິກເຊິ່ງເຖິງຖ່ອງແທ້; ການນຳແຕ່ລະຂັ້ນຍັງບໍ່ເອົາໃຈໃສ່ຊີ້ນຳລົງເລິກວຽກງານດັ່ງກ່າວຢ່າງຈິງຈັງ ແລະ ອື່ນໆ.

ການວິເຄາະງານ ແລະ ການກຳນົດຕຳແໜ່ງງານມີຄວາມສຳຄັນຢ່າງຍິ່ງ ແລະ ມີຄຸນປະໂຫຍດຫຼາຍ, ຖ້າສາມາດກຳນົດຕຳແໜ່ງງານຖືກຕ້ອງ, ຊັດເຈນ ແລະ ແທດເໝາະຕົວຈິງໄດ້ກໍ່ຈະເຮັດໃຫ້ການສອບເສັງຄັດເລືອກລັດຖະກອນໃໝ່ ແລະ ການບັນຈຸສັບຊ້ອນພະນັກງານ-ລັດຖະກອນໃສ່ຕຳແໜ່ງງານນັ້ນໆ ໄດ້ຢ່າງຖືກຕ້ອງຕາມວິຊາສະເພາະ ແລະ ຄວາມຮູ້ຄວາມສາມາດຕົວຈິງຂອງພະນັກງານ-ລັດຖະກອນ ຈຶ່ງສາມາດແກ້ໄຂໄດ້ບັນຫາພະນັກງານເຫຼືອບໍ່ພໍໃນກົງຈັກການຈັດຕັ້ງທົ່ວລະບົບການເມືອງຂັ້ນຕ່າງໆ. ການສອບເສັງຄັດເລືອກລັດຖະກອນໃໝ່ ເປັນວິທີໜຶ່ງທີ່ສຳຄັນ ເພື່ອຮັບປະກັນໃຫ້ການບັນຈຸລັດຖະກອນເຂົ້າໃນກົງຈັກການຈັດຕັ້ງໄດ້ຜູ້ເກັ່ງ, ຜູ້ດີ, ຜູ້ມີຄວາມຮູ້ຄວາມສາມາດແທ້ ແນໃສ່ເຮັດໃຫ້ການເຄື່ອນໄຫວວຽກງານມີຄຸນນະພາບສູງຂຶ້ນ ຕາມທິດທາງພະນັກງານ-ລັດຖະກອນຜູ້ໜຶ່ງສາມາດເຮັດໄດ້ຫຼາຍໜ້າວຽກ.

ສະນັ້ນ, ເພື່ອເສີມຂະຫຍາຍດ້ານດີ, ແກ້ໄຂບັນດາຈຸດອ່ອນ, ຂໍ້ຄົງຄ້າງໃນໄລຍະຜ່ານມາ ແລະ ເພື່ອປັບປຸງຍົກສູງຄຸນນະພາບໃນການເຄື່ອນໄຫວວຽກງານຂອງກົງຈັກການຈັດຕັ້ງທົ່ວລະບົບການເມືອງຂັ້ນຕ່າງໆ ແລະ ການສອບເສັງຄັດເລືອກລັດຖະກອນໃໝ່ ໃຫ້ຖືກທິດ ແລະ ດີຂຶ້ນກວ່າເກົ່າໃນຕໍ່ໜ້າ.

## ນາຍົກລັດຖະມົນຕີ ອອກຄຳສັ່ງ:

1. ໃຫ້ບັນດາທ່ານລັດຖະມົນຕີກະຊວງ, ຫົວໜ້າອົງການລັດທຽບເທົ່າກະຊວງ, ຫົວໜ້າຄະນະອົງການຈັດຕັ້ງພັກ ຂອງສູນກາງພັກ, ຫົວໜ້າຄະນະເລຂາທິການສະພາແຫ່ງຊາດ, ຫົວໜ້າຫ້ອງວ່າການປະທານປະເທດ, ປະທານສານປະຊາຊົນສູງສຸດ, ຫົວໜ້າອົງການໄອຍະການປະຊາຊົນສູງສຸດ, ປະທານອົງການກວດສອບແຫ່ງລັດ, ປະທານສູນກາງແນວລາວສ້າງຊາດ, ປະທານສະຫະພັນນັກຮົບເກົ່າແຫ່ງຊາດ, ປະທານ ຫຼື ເລຂາອົງການຈັດຕັ້ງມະຫາຊົນຂັ້ນສູນກາງ, ເຈົ້າຄອງນະຄອນຫຼວງວຽງຈັນ ແລະ ເຈົ້າແຂວງ ກວດກາຄືນການກຳນົດຕຳແໜ່ງງານຂອງການຈັດຕັ້ງຕົນໃນໄລຍະຜ່ານມາ ແລ້ວ

ປັບປຸງແກ້ໄຂຈຸດທີ່ເຫັນວ່າບໍ່ຖືກຕ້ອງໃຫ້ຂາດຕົວ ເພາະການກຳນົດຕຳແໜ່ງງານໃນເມື່ອກ່ອນມີລັກສະນະເພີ່ມຈຳນວນລັດຖະກອນຂຶ້ນທຸກໆປີ;

2. ສຳລັບກະຊວງ, ອົງການຈັດຕັ້ງພັກ-ລັດ ຫຼື ອົງການປົກຄອງທ້ອງຖິ່ນໃດ ຖ້າບໍ່ທັນໄດ້ກຳນົດຕຳແໜ່ງງານ ຕ້ອງກຳນົດຕຳແໜ່ງງານ ຂອງກົງຈັກການຈັດຕັ້ງຕົນ ໂດຍມີການວິເຄາະ ແລະ ດັດສົມວຽກງານໃຫ້ຖືກຕ້ອງ ແລະ ເໝາະສົມ ບົນພື້ນຖານຄົນຜູ້ໜຶ່ງຮັບຜິດຊອບຫຼາຍວຽກ ເພື່ອຫຼຸດຜ່ອນການຂໍເພີ່ມລັດຖະກອນເລື້ອຍໆ;

3. ການກວດກາທົບທວນ ແລະ ກຳນົດຕຳແໜ່ງງານຄືນໃໝ່ນີ້ ຕ້ອງຖືກຕ້ອງ ແລະ ສອດຄ່ອງກັບປະລິມານວຽກງານຕົວຈິງທີ່ມີ, ກົມໃດ, ພະແນກໃດ ຫຼື ກົງຈັກການຈັດຕັ້ງໃດ ມີຈຳນວນລັດຖະກອນຫຼາຍແລະບໍ່ສົມຄູ່ກັບໜ້າວຽກທີ່ມີ ຕ້ອງສັບຊ້ອນພະນັກງານ-ລັດຖະກອນ ເຂົ້າກັບກົມ, ພະແນກ ຫຼື ກົງຈັກການຈັດຕັ້ງ ທີ່ພະນັກງານ-ລັດຖະກອນບໍ່ພໍ ໃຫ້ມີຈຳນວນເໝາະສົມ, ພາຍຫຼັງສັບຊ້ອນແລ້ວຕ້ອງໄດ້ເອົາໃຈໃສ່ຝຶກອົບຮົມເຂົາເຈົ້າເຫຼົ່ານັ້ນໃຫ້ມີຄວາມເຂັ້ມແຂງທາງດ້ານວິຊາສະເພາະ ແລະ ມີຫຼັກໝັ້ນທັດສະນະຊົນຊັ້ນ ທີ່ຖືກຕ້ອງ, ມີຄວາມຮັບຜິດຊອບ, ສາມາດຈັດຕັ້ງປະຕິບັດວຽກງານໃຫ້ມີຄຸນນະພາບເດັດຂາດ ບໍ່ໃຫ້ເພີ່ມຕຳແໜ່ງງານ ແລະ ຈຳນວນພົນທີ່ບໍ່ຈຳເປັນ ໃນທຸກກົງຈັກການຈັດຕັ້ງ;

4. ພາຍຫຼັງທີ່ກວດກາ, ທົບທວນ ແລະ ກຳນົດຕຳແໜ່ງງານຄືນໃໝ່ສຳເລັດແລ້ວ ໃຫ້ທຸກການຈັດຕັ້ງຂັ້ນສູນກາງ ແລະ ອົງການປົກຄອງທ້ອງຖິ່ນ ສະເໜີມາຍັງກະຊວງພາຍໃນ ພິຈາລະນາຮັບຮອງຈຳນວນຕຳແໜ່ງງານ ແລະ ຈຳນວນພົນ ເພື່ອລາຍງານລັດຖະບານ ພິຈາລະນາ;

5. ໃຫ້ກະຊວງພາຍໃນ ເປັນເຈົ້າການຊຸກຍູ້, ຕິດຕາມ ແລະ ແນະນຳພາກສ່ວນກ່ຽວຂ້ອງໃນການສຳຫຼວດກວດກາ, ທົບທວນ ແລະ ກຳນົດຕຳແໜ່ງງານຄືນໃໝ່ ໃຫ້ຖືກຕ້ອງ, ຄົບຖ້ວນ ແລະ ແທດເໝາະກັບສະພາບຕົວຈິງຂອງແຕ່ລະຂະແໜງການ, ແຕ່ລະອົງການ ແລະ ທ້ອງຖິ່ນ;
   5.1 ໃຫ້ກະຊວງພາຍໃນ ສົມທົບກັບກະຊວງ, ອົງການຈັດຕັ້ງຕ່າງໆ ແລະ ອົງການປົກຄອງທ້ອງຖິ່ນ ປັບປຸງກົນໄກຕິດຕາມ-ປະເມີນຜົນການປະຕິບັດໂມງເວລາໃນການເຮັດວຽກ ແລະ ການປະຕິບັດໜ້າທີ່ເພື່ອຄຸ້ມຄອງ ແລະ ດັດສົມຈຳນວນພະນັກງານ-ລັດຖະກອນ ໃຫ້ເໝາະສົມກັບຕຳແໜ່ງງານ ແລະ ຈຳນວນປະລິມານວຽກຕົວຈິງ;
   5.2 ໃຫ້ກະຊວງພາຍໃນ ຮີບຮ້ອນຄົ້ນຄວ້າສ້າງຮ່າງດຳລັດວ່າດ້ວຍລະບົບກົງຈັກການຈັດຕັ້ງລັດ ແລະ ຮ່າງດຳລັດວ່າດ້ວຍການກຳນົດຕຳແໜ່ງງານ ແລ້ວສະເໜີລັດຖະບານພິຈາລະນາ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດ.

6. ເພື່ອຈັດຕັ້ງປະຕິບັດນະໂຍບາຍການປະຢັດລາຍຈ່າຍງົບປະມານຂອງລັດ. ສະນັ້ນ, ໃຫ້ທຸກອົງການຈັດຕັ້ງໃນລະບົບການເມືອງທຸກຂັ້ນ ໂຈະການສ້າງຕັ້ງກົງຈັກໃໝ່ ທີ່ບໍ່ຈຳເປັນ ດັ່ງນີ້:
   6.1 ບໍ່ອະນຸຍາດໃຫ້ກຳນົດກົງຈັກການຈັດຕັ້ງໃໝ່ ເຂົ້າໃນກົດໝາຍ ຫຼື ດຳລັດ;

6.2 ເດັດຂາດບໍ່ອະນຸຍາດໃຫ້ມີການສ້າງຕັ້ງກົງຈັກ (ກະຊວງ, ອົງການລັດທຽບເທົ່າກະຊວງ, ທະບວງ, ອົງການລັດທຽບເທົ່າທະບວງ, ກົມ, ອົງການລັດທຽບເທົ່າກົມ, ພະແນກ, ອົງການລັດທຽບເທົ່າພະແນກ, ຂະແໜງ ແລະ ໜ່ວຍງານ) ເພີ່ມອີກ;

6.3 ສໍາລັບຂົງເຂດການຈັດຕັ້ງພັກ, ສະພາແຫ່ງຊາດ, ສານປະຊາຊົນ, ອົງການໄອຍະການປະຊາຊົນ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ, ອົງການຈັດຕັ້ງມະຫາຊົນ ກໍລະນີມີຄວາມຈໍາເປັນສ້າງຕັ້ງກົງຈັກການຈັດຕັ້ງຂຶ້ນໃໝ່ ໃຫ້ປຶກສາຫາລືເອກະພາບນໍາກະຊວງພາຍໃນ ກ່ອນ ແລ້ວຈຶ່ງສະເໜີຂັ້ນເທິງ ທີ່ມີສິດອໍານາດພິຈາລະນາຕົກລົງ;

6.4 ໃຫ້ທຸກອົງການຈັດຕັ້ງຂັ້ນສູນກາງຄົ້ນຄວ້າປັບປຸງສັບຊ້ອນກົງຈັກຂັ້ນພະແນກຂອງກົມ ແລະ ອົງການທຽບເທົ່າກົມຄືນໃໝ່ ໂດຍສະເພາະແມ່ນພະແນກບໍລິຫານ, ພະແນກແຜນການ, ພະແນກພົວພັນ-ຮ່ວມມືສາກົນ ທີ່ມີພາລະບົດບາດ-ໜ້າທີ່ ກ້າວກ່າຍກັນ, ຊໍ້າຊ້ອນ ພາລະບົດບາດຂອງຫ້ອງການ, ກົມແຜນການ ແລະ ການຮ່ວມມື ຂອງອົງການຕົນ;

6.5 ໃຫ້ທຸກອົງການຈັດຕັ້ງຂັ້ນສູນກາງຄົ້ນຄວ້າປັບປຸງສັບຊ້ອນຄືນໃໝ່ກົງຈັກຂັ້ນຂະແໜງ ແລະ ໜ່ວຍງານ ທີ່ຂຶ້ນກັບພະແນກຂອງກົມ ໂດຍສະເພາະແມ່ນກົມຊ່ວຍໜູນ. ຕໍ່ໄປນີ້ ບໍ່ອະນຸຍາດໃຫ້ມີຂະແໜງ ຫຼື ໜ່ວຍງານ ທີ່ຂຶ້ນກັບພະແນກຂອງກົມ ແລະ ອົງການທຽບເທົ່າກົມ ຖ້າຫາກບໍ່ໄດ້ຮັບການກວດກາ ແລະ ອະນຸມັດດ້ານຕໍາແໜ່ງງານກ່ອນ;

6.6 ໃຫ້ບັນດາກະຊວງ-ອົງການລັດທຽບເທົ່າກະຊວງ ຮີບຮ້ອນຜັນຂະຫຍາຍພາລະບົດບາດຂອງກະຊວງ ໃນການແບ່ງຂັ້ນຄຸ້ມຄອງ ແລະ ການມອບວຽກໃຫ້ທ້ອງຖິ່ນຢ່າງຈະແຈ້ງຂາດຕົວ ຕາມທິດສາມສ້າງ, ກະຊວງ ແລະ ອົງການລັດທຽບເທົ່າກະຊວງເຮັດພາລະບົດບາດຄຸ້ມຄອງມະຫາພາກຕິດຕາມກວດກາເປັນຕົ້ນຕໍ;

6.7 ສໍາລັບອົງການປົກຄອງທ້ອງຖິ່ນ ຕ້ອງຫຼີກເວັ້ນລັກສະນະທີ່ວ່າກົງຈັກຂອງກະຊວງ, ອົງການລັດທຽບເທົ່າກະຊວງ ມີຈໍານວນເທົ່າໃດກົມ, ຢູ່ຂັ້ນທ້ອງຖິ່ນ ກົງຈັກຂອງພະແນກຂັ້ນແຂວງ ກໍ່ມີເທົ່ານັ້ນຂະແໜງ ແລະ ກົງຈັກຂອງຫ້ອງການຂັ້ນເມືອງ ມີເທົ່ານັ້ນໜ່ວຍງານ, ບໍ່ອະນຸຍາດໃຫ້ມີໜ່ວຍງານ ແລະ ຈຸງານ ທີ່ຂຶ້ນກັບຂະແໜງຂອງພະແນກ, ອົງການທຽບເທົ່າ ພະແນກຂັ້ນແຂວງບໍ່ອະນຸຍາດໃຫ້ມີຈຸງານທີ່ຂຶ້ນກັບໜ່ວຍງານຂອງຫ້ອງການ, ອົງການທຽບເທົ່າຫ້ອງການຂັ້ນເມືອງ.

7. ກ່ຽວກັບວຽກງານການບັນຈຸລັດຖະກອນໃໝ່ ໃຫ້ເອົາໃຈໃສ່ຕື່ມດັ່ງນີ້:

7.1 ໃຫ້ກະຊວງພາຍໃນຄົ້ນຄວ້າ, ສ້າງ ແລະ ປັບປຸງນິຕິກໍາກ່ຽວກັບວຽກງານການສອບເສັງລັດຖະກອນໃໝ່ ໃຫ້ຮັດກຸມ ແລະ ເໝາະສົມກັບສະພາບຕົວຈິງ. ຄົ້ນຄວ້າປັບປຸງຄືນໃໝ່ລະບົບ, ກົນໄກ, ວິທີ ແລະ ຂັ້ນຕອນການສອບເສັງ ນັບແຕ່ຂັ້ນຕອນການປະກາດຮັບສະໝັກຮອດຂັ້ນຕອນການພິຈາລະນາອະນຸມັດ. ພ້ອມທັງເຜີຍແຜ່, ແນະນໍາ, ຕິດຕາມ ກວດກາການຈັດຕັ້ງປະຕິບັດໃຫ້ທົ່ວເຖິງ ເພື່ອຮັບປະກັນການຈັດຕັ້ງປະຕິບັດມີຄວາມເອກະພາບ, ໂປ່ງໃສ ແລະ ມີຄວາມຍຸຕິທໍາ;

7.2 ໃຫ້ຄະນະນໍາບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການຂັ້ນສູນກາງ, ອົງການປົກຄອງຂັ້ນແຂວງ ແລະ ອົງການປົກຄອງຂັ້ນເມືອງ ເອົາໃຈໃສ່ຊີ້ນໍາວຽກງານການສອບເສັງ

ແລະ ການຄັດເລືອກລັດຖະກອນໃໝ່ໃນຂະແໜງການ ແລະ ທ້ອງຖິ່ນຂອງຕົນ ໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ, ຮັບປະກັນໃຫ້ມີຄຸນນະພາບ, ມີຄວາມສະເໝີພາບ, ໂປ່ງໃສ ແລະ ຍຸຕິທຳ, ຮັບຜິດຊອບໂດຍກົງຕໍ່ກັບຜົນສຳເລັດ ແລະ ຂໍ້ຂາດຕົກບົກຜ່ອງທີ່ເກີດຂຶ້ນໃນຂະແໜງການ ແລະ ທ້ອງຖິ່ນຂອງຕົນ, ການສອບເສັງລັດຖະກອນໃໝ່ ໃຫ້ອີງໃສ່ຕຳແໜ່ງງານຫວ່າງທີ່ຕ້ອງການຕົວຈິງ, ຜົນການສອບເສັງຕ້ອງຕິດປະກາດເປີດເຜີຍ ແລະ ໃຫ້ຄັດເລືອກເອົາຜູ້ທີ່ສອບເສັງໄດ້ຕາມມາດຕະ ຖານ, ຖືກຕ້ອງຕາມວິຊາສະເພາະ ແລະ ເງື່ອນໄຂ ທີ່ໄດ້ກຳນົດໄວ້ໃນຕຳແໜ່ງງານ. ຫຼີກເວັ້ນການສອບເສັງແບບລວມໆ, ຮູບການ, ການປະຕິບັດນະໂຍບາຍ ຫຼື ວິ່ງເຕັ້ນເພື່ອໄດ້ເຂົ້າເປັນລັດຖະ ກອນ. ເດັດດ່ຽວແກ້ໄຂປະກົດການຫຍໍ້ທໍ້ໃນການຄັດເລືອກບັນຈຸລັດຖະກອນໃໝ່ ໃຫ້ຂາດຕົວ.

໘. ໃຫ້ບັນດາລັດຖະມົນຕີກະຊວງ, ຫົວໜ້າອົງການລັດທຽບເທົ່າກະຊວງ, ຫົວໜ້າຄະນະອົງການພັກຂອງສູນກາງພັກ, ຫົວໜ້າຄະນະເລຂາທິການສະພາແຫ່ງຊາດ, ຫົວໜ້າຫ້ອງວ່າການປະທານປະເທດ, ປະທານສານປະຊາຊົນສູງສຸດ, ຫົວໜ້າອົງການໄອຍະການປະຊາຊົນສູງສຸດ, ປະທານອົງການກວດສອບແຫ່ງລັດ, ປະທານສູນກາງແນວລາວສ້າງຊາດ, ປະທານສະຫະພັນນັກຮົບເກົ່າແຫ່ງຊາດ, ປະທານ/ເລຂາອົງການຈັດຕັ້ງມະຫາຊົນຂັ້ນສູນກາງ, ເຈົ້າຄອງນະຄອນຫຼວງວຽງຈັນ ແລະ ບັນດາເຈົ້າແຂວງ ເປັນເຈົ້າການຮັບຜິດຊອບນຳພາ-ຊີ້ນຳຈັດຕັ້ງປະຕິບັດຄຳສັ່ງສະບັບນີ້ ໃຫ້ເລິກເຊິ່ງ, ທົ່ວເຖິງ ແລະ ມີຜົນສຳເລັດ; ຈັດຕັ້ງໂຄສະນາເຜີຍແຜ່ໃຫ້ພະນັກງານ-ລັດຖະກອນ ທີ່ຢູ່ໃນການຄຸ້ມຄອງຂອງຂະແໜງການຕົນທຸກຂັ້ນ ໃຫ້ຮັບຮູ້, ເຂົ້າໃຈ ແລະ ຈັດຕັ້ງປະຕິບັດຢ່າງເຂັ້ມງວດ;

໙. ມອບໃຫ້ກະຊວງພາຍໃນ ເປັນເຈົ້າການຈັດຕັ້ງຜັນຂະຫຍາຍ, ຕິດຕາມ, ຊຸກຍູ້, ກວດກາ ແລະ ແນະນຳ ທຸກພາກສ່ວນໃນການຈັດຕັ້ງປະຕິບັດໃຫ້ປະກົດຜົນເປັນຈິງ ແລ້ວລາຍງານຄວາມຄືບໜ້າໃຫ້ລັດຖະບານເປັນແຕ່ລະໄລຍະ;

10. ຄຳສັ່ງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ນາຍົກລັດຖະມົນຕີ

ທອງລຸນ ສີສຸລິດ